**37. ຖ້າຜູ້ຖືຮຸ້ນຕ້ອງການຂາຍຮຸ້ນໄດ້ໄວ ຄວນເຮັດແນວໃດ?**

ປຶກສາກັບນາຍໜ້າຊື້-ຂາຍຫຼັກຊັບກ່ອນການຂາຍຮຸ້ນ ເພື່ອສອບຖາມກ່ຽວກັບລາຄາສະເໜີຊື້ຂອງຜູ້ລົງທຶນວ່າຜູ້ສະເໜີຊື້ຕ້ອງການຊື້ໃນລາຄາເທົ່າໃດ ແລະ ຜູ້ສະເໜີຂາຍຮຸ້ນຕ້ອງຂາຍໃນລາຄາທີ່ເທົ່າກັບຜູ້ສະເໜີຊື້ ຫຼື ໃນລາຄາທີ່ຕໍ່າກວ່າຜູ້ສະເໜີຊື້ ຈຶ່ງສາມາດຂາຍຮຸ້ນໄດ້ໄວ.

<u>ຕົວຢ່າງ:</u> ມື້ວານລາຄາຮຸ້ນຂອງທ່ານມີລາຄາປິດທີ່ 7.500 ກີບ/ຮຸ້ນ ຖ້າທ່ານຂາຍຮຸ້ນຕ້ອງສະເໜີລາຄາສັ່ງຂາຍຢູ່ທີ່ 7.500 ກີບ/ຮຸ້ນ ຫຼື ຫຼຸດຕໍ່າລົງຈົນກວ່າຈະໄດ້ຂາຍ ໂດຍບໍ່ໃຫ້ຫຼຸດຂອບເຂດ ±10% ຫຼືບໍ່ຫຼຸດ 6.750 ກີບ.

ການຂາຍຮຸ້ນກໍເໝືອນກັບການຂາຍສິນຄ້າທົ່ວໄປ. ໃນເວລາເຮົາຕ້ອງການຂາຍ ຖ້າມີຄົນຕ້ອງການຊື້ໃນເວລາດຽວກັນ ໃນຈຳນວນ ແລະ ລາຄາທີ່ເຮົາຕ້ອງການຂາຍ ເຮົາກໍຈະໄດ້ຂາຍສິນຄ້ານັ້ນໆ. ເຖິງຢ່າງໃດກໍຕາມ ກໍລະນີທ່ານຕ້ອງການຂາຍຮຸ້ນ (ອາດບໍ່ສາມາດຂາຍໄດ້ໄວຕາມທີ່ທ່ານຕ້ອງການ) ແມ່ນສາມາດປຶກສາກັບນາຍໜ້າຊື້-ຂາຍຫຼັກຊັບ ເພື່ອສອບຖາມກ່ຽວກັບຂອບເຂດລາຄາຊື້-ຂາຍໃນມື້.